Washington State Department of Social & Health Services
Transforming lives

# ຣາຍລະອຽດກ່ຽວກັບບົດບາດຂອງທ່ານໃນນາມເປັນຜູ້ຕາງໜ້າ ສໍາລັບການອໍານວຍຄວາມສະດວກເພີ້ມເຕີມທີ່ຈໍາເປັນ (NSA) ທີ່ຖືກຊີ້ບອກ
## Information About Your Role as the Identified Necessary Supplemental Accommodation (NSA) Representative

| ທ່ານເປັນຜູ້ຖືກບົ່ງຕົວວ່າເປັນຜູຕາງໜ້າ NSA ຂອງຜູ້ຮັບການຊ່ວຍເຫລືອສໍາລັບ: | |
|---|---|
| ຜູ້ຈັດການຊ່ວຍເຫລືອເອກສານ | ເລກໂທຣະສັບ |

**ຜູຕາງໜ້າ NSA ຂອງຜູ້ຮັບການຊ່ວຍເຫລືອແມ່ນຫຍັງ?**

ກົດໝາຍຂອງຣັດ (RCW) ແລະ ກົດຣະບຽບ (WAC) ຂອງພະແນກບໍຣິຫານຄວາມເສັຽອົງລະດ້ານການຈະເຣີນເຕີບໂຕ (DDA) ບົ່ງໄວ້ວ່າໃບໜັງສືແຈ້ງການຕ່າງໆຂອງການຕິດຕໍ່ສື່ສານລວມທັງການຕັດສິນທັງໝົດທີ່ເປັນຜົນສະທ້ອນເຖິງເງື່ອນໄຂຮັບເອົາການຊ່ວຍເຫລືອຂອງພະແນກ DDA, ການບໍຣິການຂອງ DDA, ແລະ ການເລືອກເອົາຜູ້ໃຫ້ການບໍຣິການຈະຖືກຊົ່ງໄປຫາຜູ້ຮັບການຊ່ວຍເຫລືອຂອງພະແນກ DDA ແລະ ຢ່າງໜ້ອຍຄົນອື່ນອີກຄົນນຶ່ງ.ຄົນອື່ນຄົນນີ້ຈະຖືກເອີ້ນວ່າເປັນຜູ້ຕາງໜ້າ NSA.

"ຜູ້ຕາງໜ້າສໍາລັບການອໍານວຍຄວາມສະດວກເພີ້ມເຕີມທີ່ຈໍາເປັນ" ໝາຍເຖິງບຸກຄົນຜູ້ທີ່ຮັບເອົາໃບໂກປີ້ຂອງໃບແຈ້ງການກ່ຽວກັບການກະທໍາທີ່ຖືກວາງອອກມາ (PANs) ຂອງພະແນກ DDA ແລະ ການຕິດຕໍ່ສື່ສານຂອງກົມຕ່າງໆເພື່ອວ່າຈະຊ່ວຍຜູ້ຮັບການຊ່ວຍເຫລືອໃຫ້ເຂົ້າໃຈເອກສານ ແລະ ໃຊ້ສິດທິຂອງຜູ້ຮັບການຊ່ວຍເຫລືອ. ຜູ້ຕາງໜ້າ NSA ຈະຖືກບົ່ງຕົວໂດຍຜູ້ຮັບການຊ່ວຍເຫລືອຂອງພະແນກ DDA ເມື່ອເວລາຜູ້ຮັບການຊ່ວຍເຫລືອບໍ່ມີຜູ້ປົກຄອງຕາມກົດໝາຍ ແລະ ຜູ້ຮັບການຊ່ວຍເຫລືອໄດ້ຮ້ອງຂໍເອົາ ຫລື ກໍາລັງໄດ້ຮັບການບໍຣິການຂອງພະແນກ DDA ຢູ່.

**ຄວາມຮັບຜິດຊອບທາງກົດໝາຍແນວໃດແດ່ທີ່ຂ້າພະເຈົ້າມີຢູ່ໃນຖານະເປັນຜູ້ຕາງໜ້າ NSA ຂອງຜູ້ຮັບການຊ່ວຍເຫລືອ?**

ຜູຕາງໜ້າພວກດຽວເທົ່ານັ້ນທີ່ມີໜາທີ່ຮັບຜິດຊອບທາງກົດໝາຍທຸກໆຢ່າງສໍາລັບຜູ້ຮັບການຊ່ວຍເຫລືອແມ່ນ:

- ພໍ່ລ້ຽງແມ່ລ້ຽງ, ພໍ່ນ້າແມ່ນາ, ຫລື ພໍ່ແມ່ບຸນທັມຜູ້ທີ່ມີຄວາມຄຸ້ມຄອງເດັກນ້ອຍ/ຜູ້ຮັບການຊ່ວຍເຫລືອຂອງເຂົາເຈົ້າຊຶ່ງມີອາຍຸຕໍ່າກວ່າ 18 ປີ;
- ຜູ້ປົກຄອງຕາມກົດໝາຍທີ່ຖືກແຕ່ງຕັ້ງໂດຍສານສໍາລັບຜູ້ຮັບການຊ່ວຍເຫລືອທຸກໆອາຍຸ.

**ຄວາມຮັບຜິດຊອບຂອງຂ້າພະເຈົ້າແມ່ນແນວໃດແດ່ໃນຖານະເປັນຜູ້ຕາງໜ້າ NSA ທີ່ຖືກບົ່ງຕົວຂອງຜູ້ຮັບການຊ່ວຍເຫລືອ?**

ໃນນາມຜູ້ຖືກແຕ່ງຕັ້ງໃຫ້ເປັນຜູ້ຕາງໜ້າ NSA ຂອງຜູ້ຮັບການຊ່ວຍເຫລືອ, ທ່ານຈະໄດ້ຮັບໃບໂກປີ້ຂອງໃບແຈ້ງການກ່ຽວກັບການກະທໍາທີ່ຖືກວາງອອກມາຂອງພະແນກ DDA ທຸກໆໃບ ແລະ ການຕິດຕໍ່ສື່ສານອື່ນໆຂອງພະແນກ DDA ທີ່ຖືກສົ່ງໄປຫາຜູ້ຮັບການຊ່ວຍເຫລືອ.

- ທ່ານທໍາໜ້າທີ່ໃນນາມຂອງເດັກນ້ອຍທີ່ອາຍຸຕໍ່າກວ່າ 18 ປີ ຫລື ຊ່ວຍເຫລືອຜູ້ຮັບການຊ່ວຍເຫລືອຜູ້ໃຫຍ່ຂອງພະແນກ DDA ໃຫ້ເຂົ້າໃຈໃບແຈ້ງການທີ່ຖືກສົ່ງໄປຫາເຂົາເຈົ້າໂດຍພະແນກ DDA.
- ທ່ານຊ່ວຍເຫລືອຜູ້ຮັບການຊ່ວຍເຫລືອຜ່ານຣະບົບອຸທອນ ຖ້າຫາກຜູ້ຮັບການຊ່ວຍເຫລືອຢາກຈະຂັດຄ້ານຄໍາຕັດສິນ.
- ທ່ານປະຕິບັດໜ້າທີ່ໃນນາມຜູ້ຕາງໜ້າຂອງຜູ້ຮັບການຊ່ວຍເຫລືອພຽງແຕ່ສໍາລັບຈຸດປະສົງຂອງການຮັບເອົາໃບໂກປີ້ຂອງໃບແຈ້ງການ ແລະ ຊ່ວຍເຫລືອຜູ້ຮັບການຊ່ວຍເຫລືອເພື່ອຈະເຂົ້າໃຈ ແລະ ຕອບຄືນມາ. ທ່ານບໍ່ມີ"ສິດອໍານາດທາງກົດໝາຍ"ເພື່ອຈະເຊັນຊື່ສໍາລັບຜູ້ຮັບການຊ່ວຍເຫລືອນອກຈາກວ່າທ່ານຍັງເປັນພໍ່ແມ່/ຜູ້ໃຫຍ່ຮັບຜິດຊອບຕາມກົດໝາຍອີກ (ຕາມທີ່ຖືກບັນຣະຍາຍຢູ່ຂ້າງລຸ່ມນີ້) ສໍາລັບເດັກນ້ອຍອາຍຸ 17 ປີ ແລະ ນ້ອຍກວ່າ ຫລື ວ່າທ່ານເປັນຜູ້ປົກຄອງສໍາລັບຄົນໃດຄົນນຶ່ງອາຍຸ 18 ປີ ແລະ ແກ່ກວ່າ.

**ຂ້າພະເຈົ້າມີໜາທີ່ຮັບຜິດຊອບອັນນີ້ດົນປານໃດ?**

- ຖ້າທ່ານເປັນພໍ່ລ້ຽງແມ່ລ້ຽງ, ພໍ່ນ້າແມ່ນ້າ, ຫລື ພໍ່ແມ່ບຸນທັມຂອງຜູ້ຮັບການຊ່ວຍເຫລືອອາຍຸຕໍ່າກວ່າ 18 ປີ, ທ່ານຈະມີໜາທີ່ຮັບຜິດຊອບຕາມກົດໝາຍນີ້ໄປຈົນກວ່າຈະຮອດວັນເກີດອາຍຸ 18 ປີ. ພໍ່ແມ່ຈະບໍ່ລະຖີ້ມຄວາມຮັບຜິດຊອບຂອງຜູ້ຕາງໜ້າ NSA ອັນນີ້ສໍາລັບລູກຕໍ່າກວ່າກະສຽນຂອງເຂົາເຈົ້າ.
- ຖ້າຫາກວ່າທ່ານເປັນເປັນຜູ້ປົກຄອງດູແລຕາມກົດໝາຍທີ່ສານໄດ້ແຕ່ງຕັ້ງສໍາຮັບເດັກນ້ອຍ ຫລື ຜູ້ໃຫຍ່, ທ່ານຈະມີໜາທີ່ຮັບຜິດຊອບນີ້ຈົນກວ່າການປົກຄອງດູແລນັ້ນຈະຖືກຕັດ. ຜູ້ປົກຄອງດູແລຈະຮ້ອງຂໍເອົາຄົນອື່ນອີກທີ່ຈະປະຕິບັດໜ້າທີ່ເປັນຜູ້ຕາງໜ້າ NSA ຂອງຜູ້ຮັບການຊ່ວຍເຫລືອໄດ້.
- ຖ້າຫາກວ່າທ່ານບໍ່ມີຄວາມສໍາພັນທາງກົດໝາຍນໍາຜູ້ຮັບການຊ່ວຍເຫລືອ, ທ່ານສາມາດເຊົາເປັນຜູ້ຕາງໜ້າ NSA ຂອງຜູ້ຮັບການຊ່ວຍເຫລືອໄດ້ໃນເວລາໃດກໍ່ໄດ້ໂດຍການແຈ້ງບອກໃຫ້ຜູ້ຮັບການຊ່ວຍເຫລືອ ແລະ ຜູ້ຈັດການເອກສານ/ຜູ້ຊ່ວຍເຫລືອເອກສານຂອງພະແນກ DDD ຂອງຜູ້ຮັບການຊ່ວຍເຫລືອ.
- ຖ້າຫາກວ່າທ່ານບໍ່ມີຄວາມສໍາພັນທາງກົດໝາຍກັບຜູ້ຮັບການຊ່ວຍເຫລືອ,ຜູ້ຮັບການຊ່ວຍເຫລືອອາດຈະແຈ້ງບອກຜູ້ຈັດການເອກສານຂອງເຂົາເຈົ້າ ແລະ ຮ້ອງຂໍເອົາຜູ້ຕາງໜ້າ NSA ຄົນໃໝ່.

**ຖ້າຫາກວ່າຜູ້ຮັບການຊ່ວຍເຫລືອທີ່ຂ້າພະເຈົ້າເປັນຜູ້ຕາງໜ້າໃຫ້ນັ້ນບໍ່ຢາກໃຫ້ຂ້າພະເຈົ້າເປັນຜູ້ຕາງໜ້າ NSA ໃຫ້ເຂົາເຈົ້າດ, ຈະເຣັດແນວໃດ?**

ຖ້າຫາກວ່າຜູ້ຮັບການຊ່ວຍເຫລືອບໍ່ຢາກໃຫ້ທ່ານເປັນຜູ້ຕາງໜ້າ NSA ຂອງເຂົາເຈົ້າ, ພະແນກ DDA ຈະຊ່ວຍເຫລືອເຂົາເຈົ້າຊອກຫາຄົນອື່ນແທນ.

- ຜູ້ຮັບການຊ່ວຍເຫລືອສາມາດປະຕິເສດທີ່ຈະຕົກລົງເຣັ່ມພ້ອມກັບການເລືອກຜູ້ຕາງໜ້າໄດ້ກໍ່ເມື່ອເຂົາເຈົ້າຫາກມີອາຍຸ 18 ປີ ຫລື ແກ່ກວ່າເທົ່ານັ້ນ ແລະ ຜູ້ຕາງໜ້າບໍ່ແມ່ນຜູ້ປົກຄອງທີ່ຖືກສານແຕ່ງຕັ້ງ.
- ຖ້າຫາກວ່າທ່ານມີຄວາມສໍາພັນທາງກົດໝາຍນໍາຜູ້ຮັບການຊ່ວຍເຫລືອ, ທ່ານສາມາດສະແດງຕົວໃນນາມຜູ້ຮັບການຊ່ວຍເຫລືອໄດ້ໂດຍປາສຈາກຄວາມຮ່ວມມືຂອງເຂົາເຈົ້າ.

**ອັນນີ້ຂາພະເຈົ້າຈະຕ້ອງໄດ້ຈ່າຍເງິນແນວໃດບໍ່?**

ມັນຈະບໍ່ມີຄ່າເສັຽເງິນ ຫລື ຄ່າທໍານຽມໃດໃນການເປັນຜູ້ມີໜ້າທີ່ຕາງໜ້າໃຫ້ຜູ້ຮັບການຊ່ວຍເຫລືອ.

**ຂ້າພະເຈົ້າຈະໂທຫາໃຜເພື່ອຈະລາຍງານບ່ອນຢູ່ ຫລື ເລກໂທຣະສັບໃໝ່?**

ທ່ານຕ້ອງໄດ້ໂທຫາຜູ້ຈັດການສຳນວນເອກສານ DDA/ແຫລ່ງຊ່ວຍເຫລືອຂອງທ່ານ ທີ່ຖືກບົ່ງຕົວຕາມທີ່ມີຊື່ຢູ່ທາງເທິງຮ່າງໃບຄຳຮ້ອງນີ້ເພື່ອຣາຍງານການປ່ຽນແປງສະຖານະການໄປສະນີ, ເລກໂທຣະສັບ, ຫລື ຖານະຕາມກົດໝາຍນຳຜູ້ຮັບການຊ່ວຍເຫລືອ.

**ຂ້າພະເຈົ້າຫວັງວ່າຈະມີການຕິດຕໍ່ພົວພັນຈາກພະແນກ DDA ຫລາຍປານໃດ?**

- ພະແນກ DDA ຈະຕິດຕໍ່ຫາທ່ານກ່ອນການຕີຣາຄາປະເມີນຜົນປະຈຳປີ ຫລື ການທົບທວນຄືນແຕ່ລະເທື່ອ ຊຶ່ງຈະເປັນຜົນສະທ້ອນໃຫ້ມີການຕັດສິນວ່າຜູ້ຮັບການຊ່ວຍເຫລືອມີສິດໃນການອຸທອນເຣື່ອງ, ເພື່ອຈະຢັ້ງຢືນບ່ອນຢູ່ໄປສະນີຂອງທ່ານ. ພະແນກ DDA ຍັງຈະພິສູດອີກຄືກັນວ່າທ່ານຍັງເຫັນພ້ອມທີ່ຈະເປັນຜູ້ຕາງໜ້າ NSA ຂອງຜູ້ຮັບການຊ່ວຍເຫລືອຢູ່ຕໍ່ໄປ ແລະ ເຂົ້າໃຈເຖິງບົດບາດຂອງທ່ານຢູ່ບໍ່. ນອກຈາກວ່າທ່ານແຈ້ງບອກຜູ້ຈັດການເອກສານວ່າທ່ານບໍ່ຕ້ອງການຢາກເປັນຜູ້ຕາງຫນ້າ NSA ຂອງຜູ້ຮັບການຊ່ວຍເຫລືອຕໍ່ໄປອີກແລ້ວ, ໃບສັນຍາຕົກລົງ ແລະ ການເຂົ້າໃຈຂອງທ່ານຈະຖືກຖືວ່າໃຊ້ການໄດ້ສຳລັບເວລາ 12 ເດືອນ.
- ພະແນກ DDA ຈະພະຍາຍາມທີ່ຈະຕິດຕໍ່ຫາທ່ານກ່ອນການສົ່ງໄປໃຫ້ຜູ້ຮັບການຊ່ວຍເຫລືອຈົດໝາຍແຈ້ງການປະຕິເສດ, ການລຸດ, ຫລື ການຍົກເລີກເງື່ອນໄຂໄດ້ຮັບ, ການບໍຣິການ ຫລື ໝໍຮັກສາພະຍາບານ ເພື່ອອະທິບາຍການຕັດສິນ ແລະ ສິດທິຕ່າງໆໃນການອຸທອນເຣື່ອງຂອງຜູ້ຮັບການຊ່ວຍເຫລືອ.
- CRM ຈະພະຍາຍາມຕິດຕໍ່ໄປຫາທ່ານຢ່າງໜ້ອຍສອງເທື່ອກ່ອນການສົ່ງຈົດໝາຍໃບແຈ້ງກະທຳທີ່ຖືກວາງໄວ້.

**ຂ້າພະເຈົ້າຈະໂທຫາໃຜຖ້າຫາກວ່າຂ້າພະເຈົ້າຫາກມີຄຳຖາມກ່ຽວກັບໃບແຈງການ ຫລື ການຕັດສິນ ຫລື ວິທີການອຸທອນເຣື່ອງ?**

ໃບແຈ້ງການກະທຳທີ່ຖືກວາງໄວ້ທຸກໆໃບຈະມີຊື່ ແລະ ເລກໂທຣະສັບເພື່ອວ່າທ່ານຈະຕິດຕໍ່ຫາ ຖ້າຫາກວ່າທ່ານມີຄຳຖາມແນວໃດ.

**ທ່ານສາມາດຈະບອກຂ້າພະເຈົ້າແນວໃດແດ່ກ່ຽວກັບວິທີການສຳລັບການອຸທອນເຣື່ອງການຕັດສິນຂອງ DDA ?**

ໃບແຈ້ງການກະທຳທີ່ຖືກວາງໄວ້ທຸກໆໃບຈະໃຫ້ຂໍ້ມູນແກ່ທ່ານກ່ຽວກັບວ່າຈະຍື່ນຂໍເອົາການອຸທອນການຕັດສິນນັ້ນໄດ້ແນວໃດ ແລະ ເວລາໃດ.

1. ຜູ້ຮັບການຊ່ວຍເຫລືອຂອງ DDA ມີສິດທີ່ຈະອຸທອນຕໍ່ການຕັດສິນຂອງ DDA ທຸກໆຢ່າງຊຶ່ງສະທ້ອນເຖິງການອະນຸມັດ, ການປະຕິເສດ, ການລຸດລົງ, ການຕັດ, ຫລື ການຖອນຕົວບໍ່ວ່າຈະເປັນເງື່ອນໄຂຮັບເອົາການຊ່ວຍເຫລືອ, ການບໍຣິການ, ໂຄງການ, ຫລື ການເລືອກເອົາຜູ້ໃຫ້ການປິ່ນປົວ.
   - ຜູ້ຮັບການຊ່ວຍເຫລືອ ແລະ ຜູ້ຕາງໜ້າ NSA ທີ່ຖືກບົ່ງຕົວຂອງເຂົາເຈົ້າຕ້ອງໄດ້ຮັບໃບຫນັງສືແຈ້ງການຂອງການຕັດສິນຂອງ DDA ທຸກໆຢ່າງຊຶ່ງສະທ້ອນເຖິງເງື່ອນໄຂຮັບເອົາການຊ່ວຍເຫລືອ, ຣະດັບຂອງການບໍຣິການ, ຫລື ການປະຕິເສດ, ຫລື ການຕັດຍົກເລີກຜູ້ໃຫ້ການປິ່ນປົວ.
   - ໃບແຈ້ງການໃບນີ້ຕ້ອງບອກວັນທີມີຜົນໃຊ້ການໄດ້ຂອງການກະທຳ, ເຫດຜົນ ແລະ ກົດຫມາຍ WAC ທີ່ກ່ຽວຂ້ອງນຳ, ສິດທິຂອງການອຸທອນ, ແລະ ກຳນົດເວລາສຳລັບການຍື່ນການອຸທອນ.
2. ການອຸທອນເຣື່ອງຂອງຜູ້ຮັບການຊ່ວຍເຫລືອຈະໄດຖືກຮັບຟັງ ແລະ ຖືກຕັດສິນໂດຍຜູ້ພິພາກສາອຳນາດການປົກຄອງ (ALJ) ໂດຍຜ່ານການຟັງເຣື່ອງຈາກອຳນາດການປົກຄອງ. ການຟັງເຣື່ອງນີ້ຈະຖືກດຳເນີນການຢູ່ໃນຕຶກຂອງກົມ DSHS ຫລື ທາງໂທຣະສັບ. ALJ ເປັນຜູ້ຟັງເຣື່ອງ ແລະ ກໍ່ຖືກບັນທຶກສຽງໄວ້ນຳ.
   - ການມີທະນາຍຕາງໜ້າໃຫນັ້ນ ບໍ່ເປັນສິ່ງຮຽກຮ້ອງຈຳເປັນ ແຕ່ກໍ່ອະນຸຍາດໃຫ້ມີໄດ້.
   - ຜູ້ຕາງໜ້າ NSA ຂອງຜູ້ຮັບການຊ່ວຍເຫລືອອາດຈະຊ່ວຍຜູ້ຮັບການຊ່ວຍເຫລືອເພື່ອຈະສະເນີກໍຣະນີຂອງເຂົາເຈົ້າຂຶ້ນມາ ຫລື ຈະໃຫ້ມີທະນາຍແທນຄວາມກໍ່ໄດ້.
   - ພະນັກງານຂອງກົມ DSHS ບໍ່ອາດເປັນຕົວແທນຕົວໃຫ້ຜູ້ຮັບການຊ່ວຍເຫລືອໄດ້ໃນເວລາການຟັງເຣື່ອງຈາກອຳນາດການປົກຄອງ.
   - ພະແນກ DDA ມີຜູ້ປະສານງານການຟັງເຣື່ອງຈາກອຳນາດການປົກຄອງຜູ້ທີ່ໃຫ້ຄວາມສະດວກໃນການດຳເນີນການສຳລັບພະແນກ DDA. ຜູ້ຊ່ວຍອັຍຍະການສູງສຸດກໍ່ມີໄວ້ໃຫເພື່ອການປຶກສາ ແລະ ບາງເທື່ອກໍ່ຕາງໜ້າໃຫ້ພະແນກ DDA.
3. ຜູ້ຮັບການຊ່ວຍເຫລືອ ຫລື ຄົນອື່ນໆຄົນໃດຄົນນຶ່ງອີກທີ່ສະແດງຕົວເປັນໃນນາມຂອງເຂົາເຈົ້າ ຈະຮ້ອງຂໍເອົາການຟັງເຣື່ອງຈາກອຳນາດການປົກຄອງໄດ້ໂດຍທາງປາກເປົ່າ ຫລື ເປັນລາຍລັກອັກສອນ.
4. ແຕ່ລະຝ່າຍ (ຜູ້ຮັບການຊ່ວຍເຫລືອ ແລະ ທາງກົມ) ຕ້ອງສະເໜີຫລັກຖານຕໍ່ບັນຫາທີ່ໄດ້ຖືກຖຽງກັນ. ຫລັກຖານຕ່າງໆຕ້ອງຖືກອີງຕາມກົດໝາຍປົກຄອງຂອງຣັດວໍຊິງຕັນ (WAC).
5. ຜູ້ພິພາກສາອຳນາດການປົກຄອງ ALJ ຈະອອກຄຳຕັດສິນເປັນລາຍລັກອັກສອນ. ຄຳຕັດສິນຕ້ອງຖືກອີງຕາມກົດໝາຍຂອງຣັດວໍຊິງຕັນ WAC.
   - ຜູ້ພິພາກສາອຳນາດການປົກຄອງ ALJ ບໍ່ມີອຳນາດທີ່ຈະບໍ່ເບິ່ງກົດໝາຍຂອງຣັດວໍຊິງຕັນ WAC ທີ່ມີໄວຢູ່ແລ້ວ ຫລື ປ່ຽນແປງກົດຫມາຍ WAC ຫລື ເປີດເຜີຍວ່າມັນບໍ່ມີຄຸນຄ່າໃຊການໄດ.
   - ຈຸດປະສົງຂອງການຟັງເຣື່ອງກໍ່ເພື່ອຈະພິຈາຣະນາເບິ່ງວ່າ ພະແນກ DDA ໄດ້ທຳການຕັດສິນທີ່ຖືກຕ້ອງ ຫລື ບໍ່ ອີງຕາມຣະບຽບການຂອງກົມ.
6. ທັງສອງຝ່າຍມີສິດໃນການອຸທອນທໍ່ການຕັດສິນຂັ້ນຕົ້ນໂດຍ ALJ ຕໍ່ຄະນະກັມມະການຂອງການອຸທອນ Board of Appeals (BOA).
   - ຄະນະກັມມະການຂອງການອຸທອນ Board of Appeals (BOA) ເຮັດວຽກໃຫ້ກົມ DSHS ເພາະສະນັ້ນຄຳຕັດສິນຂອງເພິ່ນຈຶ່ງເປັນຄຳຕັດສິນສຸດທ້າຍສຳຣັບ DSHS/DDA.
   - ຜູ້ຮັບການຊ່ວຍເຫລືອສາມາດອຸທອນຕໍ່ຄຳຕັດສິນຂອງ BOA ນຳສານສູງສຸດ.

ການອ້າງອີງກົດມາດຕຣາຂອງ WAC:

WAC 388-825-100 ເຖິງ 105

WAC 388-825-120 ເຖິງ 165

## ໃບຟອມຜູ້ຕາງໜ້າຂອງຜູ້ຮັບການຊ່ວຍເຫລືອ NSA ແມ່ນຫຍັງ (16-195)?

- ໃບຟອມຜູ້ຕາງໜ້າຂອງຜູ້ຮັບການຊ່ວຍເຫລືອ NSA ແມ່ນການອະທິບາຍກ່ຽວກັບກົດກຳນົດຂອງການອຳນວຍຄວາມສະດວກເພີ້ມເຕີມທີ່ຈຳເປັນສຳລັບຜູ້ຮັບການຊ່ວຍເຫລືອຂອງພະແນກ DDA.
- ເຖິງແມ່ນວ່າໃບຟອມ 16-195 ແມ່ນບໍ່ຈຳເປັນຕ້ອງມີ, ໃບຟອມມັນຈະຖືກແນະນຳຢ່າງແຮງກ້າໃຫ້ຖືກເອົາໃຫ້ສຳລັບ NSA ທີ່ຖືກແຕ່ງຕັ້ງ ຂອງຜູ້ຮັບການຊ່ວຍເຫລືອທຸກໆຄົນ.
- ຖ້າຫາກວ່າໃບຟອມ 16-195 ໄດ້ຖືກເອົາໃຫ້, ຈົ່ງບັນທຶກມັນໄວ້ຢູ່ໃນ SER ໃຫ້ເປັນພາກສ່ວນນຶ່ງຂອງໃບສັນຍາ NSA ແລະ ການເຂົ້າໃຈໃນບົດບາດຂອງ NSA.
- ກະຣຸນາຕິດຕໍ່ສື່ສານໄປຫາ NSA ວ່າບົດບາດໃນຕົວມັນເອງແລ້ວບໍ່ໄດ້ໃຫ້ສິດອຳນາດທາງກົດໝາຍແນວໃດຈັກຢ່າງໃນນາມຂອງຜູ້ຮັບການຊ່ວຍເຫລືອ.